DDS

PETE CERVINKA
*ຜູ້ອຳນວຍການ*

ໜ່ວຍງານສາທາລະນະສຸກແລະບໍລິການມະນຸດລັດຄາລິຟໍເນຍ

**ພະແນກບໍລິການດ້ານພັດທະນາການ**

1215 O Street, Sacramento, CA 95814

www.dds.ca.gov

GAVIN NEWSOM
*ຜູ້ວ່າການລັດ*

# ຄຳຖາມທີ່ຖາມເລື້ອຍໆ (FAQs)
# ໜ່ວຍງານການຄົ້ນຄວ້າ, ກວດສອບ ແລະປະເມີນຜົນ
# ບົດລາຍງານການຈັດຊື້ບໍລິການປະຈຳປີ (POS).

**ໜັງສືແຈ້ງການອັບເດດ ວິທີການ:**

*ໃນຖານະທີ່ເປັນສ່ວນໜຶ່ງຂອງຄວາມພະຍາຍາມຢ່າງຕໍ່ເນື່ອງໃນການປັບປຸງຄວາມຖືກຕ້ອງແລະຄວາມຄົບຖ້ວນສົມບູນຂອງຂໍ້ມູນ ແລະເພື່ອປະຕິບັດຕາມຂໍ້ກຳນົດຂອງກົດໝາຍ ພະແນກບໍລິການດ້ານພັດທະນາການ (ພະແນກ) ໄດ້ເຜີຍແຜ່ ຂໍ້ກຳນົດສະບັບປັບປຸງ ສຳລັບການລວບລວມຂໍ້ມູນປະຊາກອນທີ່ສຳຄັນ. ຂໍ້ກຳນົດເຫຼົ່ານີ້ໄດ້ນຳໄປປະຕິບັດໂດຍສູນເຣຈິນັລໃນໄຕມາດສຸດທ້າຍຂອງປີງົບປະມານ (FY) 2024-25. ວິທີການທີ່ໃຊ້ໃນການຈັດທຳບົດລາຍງານ POS ປະຈຳປີງົບປະມານ 2024-25 ໄດ້ຖືກດັດແກ້ເລັກນ້ອຍເພື່ອຕອບສະໜອງຕໍ່ການປ່ຽນແປງໃນການລວບລວມຂໍ້ມູນເຊື້ອຊາດແລະພາສາທີ່ຕ້ອງການ. ການປຽບທຽບກັບຊ່ວງເວລາກ່ອນໜ້ານີ້ຄວນເຮັດດ້ວຍຄວາມລະມັດລະວັງ ແລະຕ້ອງປຶກສາຫາລືກັບພະແນກເທົ່ານັ້ນ.*

ຄຳຖາມທີ່ຖາມເລື້ອຍໆຕໍ່ໄປນີ້ແມ່ນສະໜອງໃຫ້ເພື່ອສະໜັບສະໜູນການນຳໃຊ້ບົດລາຍງານ POS ປະຈຳປີ. ບົດລາຍງານເຫຼົ່ານີ້ໃຫ້ຂໍ້ມູນສະຫຼຸບສັງລວມ ຄ່າໃຊ້ຈ່າຍແລະການອະນຸຍາດຂອງ*ສູນເຣຈິນັລ* (RC) ແລະຂອງລັດ ບົດລາຍງານເຫຼົ່ານີ້ປົກປ້ອງຂໍ້ມູນທີ່ເປັນຄວາມລັບຕາມ ແນວປະຕິບັດດ້ານການລະບຸຕົວຕົນຂອງພະແນກບໍລິການສາທາລະນະສຸກແລະບໍລິການມະນຸດຂອງລັດຄາລິຟໍເນຍ.

1. **ບົດລາຍງານ POS ປະຈຳປີແຕກຕ່າງຈາກ ກະດານຂໍ້ມູນສາທາລະນະແບບຄອບຄຸມແນວໃດ?**
   ຄວາມແຕກຕ່າງທີ່ສຳຄັນບາງຢ່າງໄດ້ແກ່:
   - ຊ່ວງເວລາ: ກະດານຂໍ້ມູນສາທາລະນະແບບຄອບຄຸມໄດ້ຖືກຈັດລຽງຕາມເດືອນ ແລະລວມເອົາປີງົບປະມານທັງໝົດ (FYs) ນັບຕັ້ງແຕ່ປີງົບປະມານ 2011/12. ບົດລາຍງານ POS ປະຈຳປີຈະສະຫຼຸບຄັ້ງລະປີງົບປະມານ.

- ຈຳນວນລູກຄ້າ:
  - ກະດານຂໍ້ມູນສາທາລະນະແບບຄອບຄຸມຈະສະແດງໃຫ້ເຫັນລາຍຊື່ບຸຄຄົນທີ່ມີການໃຊ້ງານຢູ່ຕະຫຼອດຊ່ວງປີງົບປະມານ ຫຼື ມີຄ່າໃຊ້ຈ່າຍໃນ POS ໃນຊ່ວງປີງົບປະມານນັ້ນ.
  - ບົດລາຍງານ POS ປະຈຳປີໃຊ້ຊ່ວງເວລາ ໂດຍນັບບຸຄຄົນທີ່ມີສະຖານະການໃຊ້ງານຢູ່ໃນເດືອນມັງກອນຂອງປີງົບປະມານ ຫຼື ມີບັນທຶກ POS ຢ່າງໜ້ອຍໜຶ່ງລາຍການໃນປີງົບປະມານ.
- ຂໍ້ມູນບາງຢ່າງໃນບົດລາຍງານ POS ປະຈຳປີແມ່ນບໍ່ມີຢູ່ໃນກະດານຂໍ້ມູນສາທາລະນະແບບຄອບຄຸມ. ສິ່ງທີ່ໜ້າສັງເກດທີ່ສຸດແມ່ນຂໍ້ມູນທີ່ອະທິບາຍເຖິງການອະນຸຍາດ POS ແລະການໃຊ້ງານທີ່ສາມາດເຫັນໄດ້ໃນບົດລາຍງານ POS ປະຈຳປີເທົ່ານັ້ນ.

2. **ມີການຈັດທຳບົດລາຍງານ POS ປະຈຳປີຂຶ້ນແນວໃດ?**
   ຈະມີການຈັດທາບົດລາຍງານ POS ປະຈຳປີໃຫ້ເປັນແຟ້ມແຍກຕ່າງຫາກໃນຮູບແບບເອັກເຊວເວີກບຸກ. ເວີກບຸກແຕ່ລະປຶ້ມປະກອບດ້ວຍຊຸດແຜ່ນງານ ເຊິ່ງຈັດລຽງຕາມຫົວຂໍ້. ສາມາດເບິ່ງວິທີການໂດຍລະອຽດທີ່ໃຊ້ໃນການສ້າງບົດລາຍງານໄດ້ໃນ ເອກະສານສະພາບລວມວິທີການ.

3. **ມີບົດລາຍງານເຫຼົ່ານີ້ໃນຮູບແບບທົ່ວທັງລັດບໍ?**
   ແມ່ນແລ້ວ, ມີການໂພສບົດລາຍງານໃນຮູບແບບທົ່ວທັງລັດນີ້ຢູ່ໃນ ເວັບໄຊ ຂອງພະແນກທີ່ມີບົດລາຍງານກ່ຽວກັບສູນ RC.

4. **ບົດລາຍງານ "NoPOS" ແມ່ນຫຍັງ?**
   ບົດລາຍງານ POS ປະຈຳປີປະກອບດ້ວຍຊຸດແຜ່ນງານ "NoPOS" ເຊິ່ງເອີ້ນກັນວ່າບົດລາຍງານ "NoPOS". ບົດລາຍງານ NoPOS ອະທິບາຍລັກສະນະຂອງບຸຄຄົນທີ່ບໍ່ມີການຮຽກຮ້ອງ POS ໃນປີງົບປະມານ ໂດຍມີຄໍລັມຂໍ້ມູນຕໍ່ໄປນີ້:

- ການນັບຈຳນວນບຸຄຄົນ: ຈຳນວນບຸຄຄົນທັງໝົດທີ່ໄດ້ຮັບບໍລິການຈາກສູນ RC.
- ບຸຄຄົນທີ່ບໍ່ມີການຈັດຊື້ບໍລິການ: ຈຳນວນບຸຄຄົນທີ່ມີການຮຽກຮ້ອງ POS ຂໍທີ່ຂາດຫາຍໄປ, ເປັນສູນ, ຫຼື ເປັນລົບໃນປີງົບປະມານ.

- ເປີເຊັນທີ່ບໍ່ມີການຈັດຊື້ບໍລິການ: ເປີເຊັນຂອງບຸຄຄົນທີ່ມີການຮຽກຮ້ອງ POS ທີ່ຂາດຫາຍໄປ, ເປັນສູນ, ຫຼື ເປັນລົບໃນປີງົບປະມານ.

5. **ບົດລາຍງານການປະກັນໄພແມ່ນຫຍັງ?**
   ບົດລາຍງານ POS ປະຈຳປີປະກອບດ້ວຍຊຸດແຜ່ນງານ "ປະກັນໄພ" ຊຸດໜຶ່ງ (ຕົວຢ່າງ, InsxLang) ທີ່ອະທິບາຍຄ່າໃຊ້ຈ່າຍລະຫວ່າງບຸຄຄົນທີ່ມີການຊໍາລະຮ່ວມກັນ ຫຼື ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວຂ້ອງກັບການປະກັນໄພ. ຄໍລັມ "ການນັບຈຳນວນບຸຄຄົນ" ໃນບົດລາຍງານເຫຼົ່ານີ້ປະກອບດ້ວຍສະເພາະກຸ່ມຍ່ອຍຂອງບຸຄຄົນທີ່ມີຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບປະກັນໄພເທົ່ານັ້ນ.

6. **ເປັນຫຍັງຈຶ່ງບໍ່ມີແຖວ "ລວມທັງໝົດ" ໃນບົດລາຍງານທີ່ແບ່ງຕາມການວິນິດໄສ?**
   ໃນຕາຕະລາງທີ່ສະຫຼຸບແຕ່ລະບຸຄຄົນຕາມການວິນິດໄສ ສາມາດລະບຸບຸຄຄົນທີ່ໄດ້ຮັບການວິນິດໄສຫຼາຍກວ່າໜຶ່ງລາຍການໄວ້ໃນໝວດໝູ່ຫຼາຍກວ່າໜຶ່ງປະເພດໄດ້. ດັ່ງນັ້ນ ແຖວ "ລວມທັງໝົດ" ຈະບໍ່ສະແດງຈຳນວນບຸຄຄົນທີ່ຖືກຕ້ອງ.

7. **ຄວາມແຕກຕ່າງລະຫວ່າງບົດລາຍງານທີ່ສະແດງການແປພາສາແຜນໂປແກມສະເພາະບຸຄຄົນ (IPP) ແມ່ນຫຍັງ?**
   ບົດລາຍງານ POS ປະຈຳປີປະກອບດ້ວຍລາຍງານການແປພາສາ IPP ສອງບົດລາຍງານ ໄດ້ແກ່ “IPP45” ແລະ “IPP60” ໂດຍສະແດງໃຫ້ເຫັນຄຳຂໍການແປພາສາ IPP ແມ່ນເປັນການຮ້ອງຂໍສໍາລັບພາສາທີ່ຢູ່ໃນເກນ ຫຼື ພາສາທີ່ບໍ່ຢູ່ໃນເກນ ຕາມລໍາດັບ. ເພື່ອຈຸດປະສົງຂອງບົດລາຍງານ POS ປະຈຳປີ ພາສາທີ່ຢູ່ໃນເກນແມ່ນພາສາຫຼັກທີ່ບຸຄຄົນຢ່າງໜ້ອຍ 5% ຂອງບຸຄຄົນທີ່ໄດ້ຮັບການບໍລິການໃຊ້ໃນການປາກເວົ້າ. ການຮ້ອງຂໍຄຳແປພາສາ IPP ເປັນພາສາທີ່ຢູ່ໃນເກນຈະຕ້ອງຍື່ນຂໍພາຍໃນ 45 ມື້. ພາສາທີ່ບໍ່ຢູ່ໃນເກນແມ່ນພາສາຫຼັກທີ່ເວົ້າໂດຍບຸຄຄົນໜ້ອຍກວ່າ 5% ຂອງຜູ້ທີ່ໄດ້ຮັບບໍລິການ. ການຮ້ອງຂໍຄຳແປພາສາ IPP ເປັນພາສາທີ່ບໍ່ຢູ່ໃນເກນຈະຕ້ອງຍື່ນຂໍພາຍໃນ 60 ມື້. ສໍາລັບຂໍ້ມູນເພີ່ມເຕີມ ເຂົ້າເບິ່ງ ມາດຕາ 1810.410 ຂອງລັກສະນະ 9 ຂອງປະມວນກົດໝາຍລັດຄາລິຟໍເນຍ.

8. **ຄວາມແຕກຕ່າງລະຫວ່າງ "0" ແລະ "-" ໃນຕາຕະລາງລາຍງານແມ່ນຫຍັງ?**
   A "0" ໝາຍເຖິງຄ່າໃນຕາລາງນັ້ນແມ່ນສູນ. A "-" ຫມາຍເຖິງບໍ່ມີຂໍ້ມູນສໍາລັບຊ່ອງຂໍ້ມູນນັ້ນ.

9. **ຂໍ້ມູນພື້ນຖານໃໝ່ທີ່ນໍາມາໃຊ້ໃນໄຕມາດສຸດທ້າຍຂອງປີງົບປະມານ 2025 ຈະນໍາມາໃຊ້ໃນບົດລາຍງານ POS ບໍ?**
   ຂໍ້ມູນພື້ນຖານໃໝ່ທີ່ລວບລວມໄດ້ໂດຍສູນເຣຈິນັລໃນປີປະຕິທິນ 2025 ຈະຖືກລວມເຂົ້າໃນບົດລາຍງານ POS ປະຈໍາປີງົບປະມານ 2024/25 ປີ ຖ້າເປັນໄປໄດ້. ສາມາດເບິ່ງການນໍາໃຊ້ງານຂໍ້ມູນພື້ນຖານໂດຍລະອຽດຂອງໄດ້ໃນ ເອກະສານ Methodology Overview

10. **ຂ້າພະເຈົ້າສາມາດຮ້ອງຂໍຂໍ້ມູນລາຍລະອຽດເພີ່ມເຕີມທີ່ບໍ່ມີຢູ່ໃນບົດລາຍງານໄດ້ບໍ?**
    ແມ່ນແລ້ວ.
    ກະລຸນາເບິ່ງໜ້າເວັບການຮ້ອງຂໍບັນທຶກສາທາລະນະຢູ່ໃນເວັບໄຊຂອງພະແນກເພື່ອເບິ່ງຂໍ້ມູນເພີ່ມເຕີມ: ລິ້ງເຊື່ອມຕໍ່ກັບຫນ້າເວັບຂອງພະແນກທີ່ອະທິບາຍຂັ້ນຕອນການຮ້ອງຂໍບັນທຶກສາທາລະນະ.

11. **ຂ້າພະເຈົ້າຈະສາມາດຕິດຕໍ່ບຸຄຄົນໃດເພື່ອຂໍຄໍາຄິດເຫັນ ແລະ/ຫຼືເພື່ອສອບຖາມເພີ່ມເຕີມໄດ້ແດ່?**
    ກະລຸນາ ສົ່ງອີເມວໄປຫາພວກເຮົາຖ້າທ່ານມີຄໍາແນະນໍາ ຫຼື ພົບເຫັນບັນຫາໃດຫນຶ່ງ ຫຼື ພົບເຫັນຄວາມຜິດພາດ: Analytics@dds.ca.gov